# ໃບສະແດງຄວາມຄິດເຫັນ ອົງການໂຄວິດ 19

The Department of Children, Youth, and Families (DCYF) ໄດ້ປັບປຸງໃບສະແດງຄວາມຄິດເຫັນນີ້ ໃນວັນທີ 27 ພຶດສະພາ 2020. DCYF ຈະສືບຕໍ່ປັບປຸງເອກະສານນີ້ ຕາມຄວາມຈຳເປັນ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງທີ່ເວັບໄຊ **dcyf.wa.gov**.

ເພື່ອຢຸດການແຜ່ລະບາດເຊື້ອໂຄວິດ 19, DCYF ໄດ້ປິດລອບນີ້ໃນຕຶກອາຄານພວກເຮົາທັງໝົດ ແລະ ບໍ່ດຳເນີນທຸລະກິດແບບມາພົບປະກັນ.

**ອຸປະກອນປ້ອງກັນບຸກຄົນ (PPE)**

- ອຸປະກອນຈະລວມມີຖົງມື, ຜ້າປິດປາກ, ເສື້ອ, ເກີບ ແລະ ໜ້າກາກ.
- DCYF ໄດ້ຮັບອຸປະກອນ PPE ແລະ ກຳລັງສະໜອງໃຫ້ແກ່ສູນບໍລິການ 24/7 ແລະ ໃຫ້ພະນັກງານຜູ້ທີ່ເປັນໄປໄດ້ ທີ່ຈະສຳຜັດກັບເຊື້ອໂຄວິດ 19. ພວກເຮົາຮູ້ວ່າ ຕ້ອງການອຸປະກອນ PPE ເພີ່ມ ແລະ ພວກເຮົາກຳລັງພະຍາຍາມຫາເພີ່ມ.

## ແຜນງານຊ່ວຍເຫລືອຄອບຄົວ

**ການຢ້ຽມຢາມບ້ານ**

- ໃນເດືອນມີນາ, DCYF ໄດ້ຂໍໃຫ້ຜູ້ມອບເຄື່ອງຕາມບ້ານ ໃຫ້ຢຸດຢ້ຽມແບບພົບປະກັນ ແລະ ໃຫ້ຢ້ຽມແບບໃຊ້ວິດີໂອ ຫລື ໂທລະສັບແທນ. ການຢ້ຽມແບບສະເໝືອນຈິງ ສາມາດເຮັດໄດ້ຕໍ່ເນື່ອງຈົນເຖິງວັນທີ 30 ມິຖຸນາ.  ຜູ້ມອບເຄື່ອງຕາມບ້ານບາງທ່ານ ຈະໃຊ້ວິດີໂອ ຫລື ເວັບໄຊ, ໂທ, ເມວ ຫລື ສົ່ງຂໍ້ຄວາມ.  ຜູ້ມອບເຄື່ອງບາງທ່ານ ແມ່ນຈະວາງອຸປະກອນໃຫ້ຄອບຄົວຢູ່ທີ່ໄລຍະຫ່າງທີ່ປອດໄພ.
- DCYF ໄດ້ຂໍໃຫ້ແຜນງານທີ່ສະໜັບສະໜູນຜ່ານ Home Visiting Service Account (HVSA) ຢຸດຢ້ຽມຢາມແບບພົບປະກັນ ຈົນເຖິງທີ 30 ມິຖຸນາ.
    - ໃນໄລຍະນີ້, DCYF ຈະຈ່າຍເງິນໃຫ້ທຸກບັນຊີ ຕາມຄ່າທີ່ຖືກຕ້ອງ ແມ້ແຕ່ ຖ້າບໍ່ສາມາດບັນລຸຂໍ້ກຳນົດຕ່າງໆທັງໝົດໄດ້ກໍ່ຕາມ.

**Early Support for Infants and Toddlers (ESIT)**

- ໃນເບື້ອງຕົ້ນ ຜູ້ມອບເຄື່ອງຈະໃຊ້ໂທລະສັບ ແລະ ວິດີໂອຄໍ ຈົນເຖິງວັນທີ 30 ມິຖຸນາ ເພື່ອວ່າການຢ້ຽມຢາມສາມາດສືບຕໍ່ໄດ້ຢ່າງປອດໄພ ລະຫວ່າງເດັກນ້ອຍ ແລະ ຜູ້ມອບເຄື່ອງ.

## ສະຫວັດດີການເດັກ

**ສາຍເຂົ້າ**

- DCYF ຈະສືບຕໍ່ດຳເນີນສາຍຮອດລາຍກ່ຽວກັບການທາລຸນ ແລະ ລະເລີຍເດັກ 24/7 ໂດຍບໍ່ເສຍຄ່າເບີໂທ 1-866-363-4276.

Washington State Department of
CHILDREN, YOUTH & FAMILIES

**ການລົງຢ້ຽມ**

- DCYF ຈະສືບຕໍ່ຢ້ຽມແບບພົບປະກັນ ແຕ່ໃນລະຫວ່າງການແຜ່ລະບາດໂຄວິດ 19, ການຢ້ຽມຢາມອາດຈະຜ່ານທັງການຢ້ຽມຢາມພົບປະຕົວຈິງ ຫລື ແບບທາງອອນລາຍ.
- ເພື່ອຮັບປະກັນຄວາມປອດໄພຂອງເດັກ, DCYF ຈະສືບຕໍ່ການສອບສວນການທາລຸນ ແລະ ການລະເລີຍເດັກນ້ອຍ ແບບໄປພົບດ້ວຍຕົວເອງ.
- DCYF ໄດ້ຂໍໃຫ້ຜູ້ສະໜອງມອບເຄື່ອງປະຕິບັດຕາມຄໍາແນະນໍາ ແລະ ຫລັກການສຸຂະພາບ DOH ເພື່ອເຮັດການຢ້ຽມຢາມ ໃຫ້ປອດໄພເທົ່າທີ່ຈະເປັນໄປໄດ້ ສໍາລັບຜູ້ເຂົ້າຮ່ວມທັງໝົດ.

**ການອະນຸຍາດການດູແລອຸປະຖໍາສຸກເສີນ**

- DCYF ໄດ້ສ້າງຂັ້ນຕອນການຍົກເວັ້ນ ແລະ ການລະຫງັບການດູແລອຸປະຖໍາສຸກເສີນ ເພື່ອຊ່ວຍໂຄງການ ແລະ ຄອບຄົວ.
    - ຖ້າເຂົາເຈົ້າບໍ່ມີເງື່ອນໄຂຕາມຂໍ້ກໍານົດກົດລະບຽບບໍລິຫານຂອງລັດວໍຊິງຕັນ ໃນລະຫວ່າງພະຍາດໂຄວິດ 19, ຜູ້ດູແລອຸປະຖໍາ ຕ້ອງຕິດຕໍ່ຜູ້ອະນຸຍາດຂົງເຂດຂອງເຂົາເຈົ້າ ເພື່ອປຶກສາທາງເລືອກທີ່ມີຢູ່.
    - ໂທເບີ 1-888-543-7414 ເພື່ອຮຽນຮູ້ກ່ຽວກັບການເປັນພໍ່ແມ່ອຸປະຖໍາ.
- DCYF ໄດ້ຮ້ອງຂໍຜູ້ດູແລອຸປະຖໍາທັງໝົດ ໃຫ້ມີການເວັ້ນໄລຍະຫ່າງທາງສັງຄົມ ຕາມທີ່ກໍານົດໂດຍ DOH ແລະ ຄໍາສັ່ງຂອງຜູ້ວ່າການລັດ.

**ກວດເບິ່ງທີ່ມາ**

DCYF ຈະເຮັດການປ່ຽນແປງ ຕໍ່ກັບການກວດເບິ່ງທີ່ມາ ສໍາລັບສະຫວັດດີການເດັກ ແລະ ຫລັກສູນການຮຽນເບື້ອງຕົ້ນ ເພື່ອຫລຸດຜ່ອນເວລາທີ່ຄາດໄວ້, ຍົກເລີກຂໍ້ຈໍາກັດຕ່າງໆ ແລະ ປະເມີນຄົນທີ່ອາດຈະໃຫ້ການດູແລແກ່ເດັກນ້ອຍ.

## ການດູແລເດັກ

- ສູນດູແລເດັກ ແລະ ຜູ້ໃຫ້ບ້ານອຸປະຖໍາ ຄວນຈະບໍ່ມີຫລາຍກວ່າ 10 ຄົນທັງໝົດ ຕໍ່ຫ້ອງ ລວມທັງເດັກນ້ອຍ ແລະ ຜູ້ໃຫຍ່. ຖ້າສູນມີທີ່ຫວ່າງ ເພື່ອແຍກຫລາຍກວ່າໜຶ່ງກຸ່ມ, ເຂົາເຈົ້າອາດຈະດໍາເນີນການດັ່ງກ່າວ.
- ພະນັກງານທີ່ແກ້ໄຂບັນຫາທໍາອິດ ແລະ ພະນັກງານສໍາຄັນ ຕ້ອງການການດູແລເດັກ (ພະຍາບານ, ທ່ານໝໍ, ຕໍາຫລວດ, ນັກພະຈົນເພີງ, ແພດ ແລະ ນັກສັງຄົມສົງເຄາະ). DCYF ຈະແນະນໍາຜູ້ຊ່ວຍເຫລືອ ບໍລິການຄອບຄົວ ໃນດ້ານລາຍການທີ່ຈໍາເປັນ ແລະ ເດັກນ້ອຍທີ່ມີໂອກາດຄວາມສ່ຽງສູງສ່ວນໃຫຍ່ ອີງຕາມຄວາມຕ້ອງການຂອງຊຸມຊົນ.
- DCYF ກໍາລັງໃຫ້ການຊ່ວຍເຫລືອແກ່ຜູ້ດູແລເດັກ ພາຍໃຕ້ກົດໝາຍ CARES Act. ຜູ້ຊ່ວຍເຫລືອສາມາດຂໍສະໝັກເອົາເງິນຊ່ວຍເຫລືອ ພາຍໃນວັນທີ 30 ມິຖຸນາ ຫລື ຈົນກວ່າການສະໜອງເງິນທຶນຈະໝົດ ຢູ່ທີ່ **wacompass.force.com/PP_LoginPage**.

**ໂຄງການຊ່ວຍເຫລືອດູແລເດັກ**

- DCYF ກໍາລັງປັບປຸງລະບຽບການສໍາລັບກິດຈະກໍາ ເພື່ອວ່າຄອບຄົວສາມາດເຂົ້າເຖິງການດູແລເດັກ ໃນໄລຍະນີ້.
    - ຄອບຄົວຕ້ອງໄດ້ອະນຸຍາດສໍາລັບການດູແລຄືນ ທຸກໆ 12 ເດືອນ ແລະ ມີຂໍ້ກໍານົດຕ່າງໆ ສໍາລັບເງື່ອນໄຂຄວາມເໝາະສົມ. DCYF ກໍາລັງສ້າງກົດລະບຽບ ທີ່ຍືດຢຸ່ນ ເພື່ອວ່າ ຄອບຄົວ ສາມາດຢູ່ນໍາກັນໄດ້ຢ່າງເໝາະສົມ.
    - ຄອບຄົວຕ້ອງຂໍສະໝັກຄືນ ເມື່ອເຂົາເຈົ້າຕ້ອງການ ແລະ ລາຍງານສະພາບການ ແລະ ການເຄື່ອນໄຫວຂອງເຂົາເຈົ້າ.
    - ພວກເຮົາສົ່ງເສີມຄອບຄົວຂໍສະໝັກຄືນ ເພື່ອຮັກສາມາດຕະຖານເງື່ອນໄຂ ເພື່ອວ່າ ເຂົາເຈົ້າສາມາດເຂົ້າເຖິງການດູແລເດັກ ເມື່ອມັນຈໍາເປັນ.
    - DCYF ກໍາລັງລະງັບການຈ່າຍເງິນ ສໍາລັບເດືອນເມສາ, ພຶດສະພາ ແລະ ມິຖຸນາ ສໍາລັບຄອບຄົວ ທີ່ໄດ້ຮັບການດູແລ Working Connections Child Care. DCYF ຈະຈ່າຍເງິນໃຫ້ແກ່ຜູ້ໃຫ້ການຊ່ວຍເຫລືອໃນມູນຄ່າເຕັມ ລວມທັງອັດຕາພື້ນຖານ ແລະ ມູນຄ່າການຊໍາລະ ທີ່ຄອບຄົວໄດ້ຈ່າຍ.

**ຜູ້ເຂົ້າຮ່ວມທີ່ປະສົບຜົນສໍາເລັດໃນເບື້ອງຕົ້ນ**

- ຜູ້ໃຫ້ການຊ່ວຍເຫລືອ ທີ່ເຂົ້າຮ່ວມໃນໂຄງການຜູ້ສໍາເລັດໃນເບື້ອງຕົ້ນ ຈະສືບຕໍ່ຮັບລາງວັນປັບປຸງ ຄຸນນະພາບ ແລະ ກໍານົດລະດັບອັດຕາຄ່າງແທນເງິນຄືນ ທີ່ຄັດຕິດຢູ່ໃນການຊໍາລະລົງທະບຽນ ຂອງເຂົາເຈົ້າ. ຜູ້ວ່າການ Inslee ຈະລະງັບກົດໝາຍ ກ່ຽວຂ້ອງກັບກໍານົດເວລາໂຄງການຜູ້ ສໍາເລັດໃນເບື້ອງຕົ້ນ ແລະ ຂໍ້ກໍານົດຕ່າງໆ ທີ່ຈະມີຜົນຕໍ່ກັບການຊໍາລະເງິນຂອງເຂົາເຈົ້າ.

## Juvenile Rehabilitation (JR)

- DCYF ຈະປ່ຽນການຢ້ຽມຢາມແບບພົບປະກັນຕົວຈິງ ເປັນການຢ້ຽມຢາມແບບວິດີໂອຄໍ.
- ພະນັກງານ ແລະ ຜູ້ຊາຍທັງໝົດທີ່ເຂົ້າໃນສູນ 24/7 ຕ້ອງໄດ້ມີການກວດຄັດກອງຄືນ ເພື່ອເບິ່ງອາການໂຄວິດ 19.
- ກ່ອນເຂົ້າຕຶກ JR, ພະນັກງານ, ຜູ້ຊາຍ ແລະ ຜູ້ຮັບເໝົາ ຈະຖືກຖາມ ວ່າ ເຂົາເຈົ້າໄດ້ສໍາຜັດ ກັບໃຜຄົນໜຶ່ງທີ່ສະແດງອາການຫລືບໍ່.
- ພະນັກງານ, ປະຊາຊົນ ແລະ ຜູ້ຮັບເໝົາທັງໝົດ ຕ້ອງລ້າງມືຂອງເຂົາເຈົ້າ ກ່ອນເຂົ້າສູ່ສູນຕ່າງໆ.
- ພວກເຮົາໄດ້ຂ້າເຊື້ອຢູ່ສູນ ໂດຍສະເພາະເຂດທີ່ມີການສໍາຜັດສູງເປັນປະຈໍາ.
- ປະຊາຊົນທັງໝົດ ຕ້ອງໄດ້ແຈ້ງພະນັກງານທັນທີ ຖ້າເຂົາເຈົ້າຮູ້ສຶກບໍ່ສະບາຍ.
- ຖ້າໃຜຮູ້ສຶກບໍ່ສະບາຍ, ພະນັກງານຈະຕິດຕໍ່ຫາຜູ້ໃຫ້ບໍລິການການແພດ ທັນທີ ແລະ ແຈ້ງຄອບຄົວ.

## ຕິດຕໍ່

ກະລຸນາເຂົ້າຢ້ຽມເວັບໄຊ DCYF ສໍາລັບຂໍ້ມູນຕິດຕໍ່ ຫລື ເຂົ້າຫາເວັບໄຊ **dcyf.covid-19@dcyf.wa.gov** ຖ້າມີຄໍາຖາມໃດໜຶ່ງ.

ຖ້າທ່ານຕ້ອງການສໍາເນົາເອກະສານນີ້ເປັນຮູບແບບ ຫຼື ພາສາອື່ນ, ກະລຸນາຕິດຕໍ່ຫາ DCYF Constituent Relations (ຝ່າຍຄວາມສໍາພັນເຂດ DCYF) (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).

DCYF PUBLICATION COMM_0078 (05-29-2020) LAO (ພາສາລາວ) – LAO